CHANHTANGUEN. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 83 – 92

# ວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງ ອຸດົມໄຊ

**ຈັນມະນີ ຈັນຕະເງິນ[1], ບຸນທະວີ ສີພັນທອງ[2], ສຸດຖາວອນ ສີອຸດົມພັນ[3], ຈັນສະໝອນ ແສງດາລາ[4]**

*ພາກວິຊາ ເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

[1]*ຕິດຕໍ່ພົວພັນ:* *ຈັນມະນີ ຈັນຕະເງິນ, ຂະແໜງສະຖິຕິ, ພະແນກແຜນການ ແລະ ການລົງທຶນ ແຂວງອຸດົມໄຊ, ໂທລະສັບ 020 23964445, E-mail: chanhmany.ch@lsb.gov.la*

[2] *ພາກວິຊາ ເສດຖະສາດ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລສຸພານຸວົງ*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 03 ເມສາ 2023*
*ການປັບປຸງ: 09 ພຶດສະພາ 2023*
*ການຕອບຮັບ: 21 ພຶດສະພາ 2023*

**ບົດຄັດຫຍໍ້**

ການສຶກສາກ່ຽວກັບ ວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ, ມີຈຸດປະສົງເພື່ອ ວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນ ໂດຍໃຊ້ກຸ່ມຕົວຢ່າງ 224 ຄົວເຮືອນ ແລະ ໃຊ້ສະຖິຕິ ສຳປະສິດ Gini coefficient ໃນການວິເຄາະວິເຄາະຂໍ້ມູນ, ເຊິ່ງຜົນການສຶກສາພົບວ່າໂດຍສະເລ່ຍຄົວເຮືອນໜຶ່ງຈະມີສະມາຊິກ 7 ຄົນ, ສະມາຊິກໃນຄົວເຮືອນສ່ວນໃຫຍ່ແມ່ນມີອາຍຸຕ່ຳກວ່າ 20 ປີ, ມີສະຖານະພາບທີ່ແຕ່ງງານແລ້ວ ແລະ ລະດັບການສຶກສາຈົບຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນເປັນສ່ວນຫຼາຍ; ສຳລັບສະມາຊິກຜູ້ທີ່ສາມາດສ້າງລາຍໄດ້ໃຫ້ກັບຄອບຄົວ ຢູ່ປະມານ 3-4 ຄົນ; ໂດຍກິດຈະກຳຫຼັກທາງເສດຖະກິດພາກຄົວເຮືອນ ແມ່ນການຜະລິດກະສິກຳ ເຊິ່ງຈຸດປະສົງຫຼັກໃນການຜະລິດແມ່ນ ເພື່ອອຸປະໂພກ-ບໍລິໂພກ ແລະ ຈຳໜ່າຍ ໂດຍການຈຳໜ່າຍຢູ່ພາຍໃນໝູ່ບ້ານ ແລະ ພາຍໃນຕົວເມືອງເປັນຫຼັກ. ມີລາຍ ໂດຍສະເລ່ຍ ຢູ່ລະຫວ່າງ 8,000,000-150,000,000 ກີບ. ການວິເຄາະຄວາມສຳພັນລະຫວ່າງລາຍໄດ້ກັບໂຄງສ້າງລາຍໄດ້ແຕ່ລະຂະແໜງການກັບລາຍໄດ້ລວມພົບວ່າ ລາຍໄດ້ລວມແມ່ນມີຄວາມສຳພັນ ຫຼື ຂຶ້ນກັບລາຍໄດ້ຈາກການຜະລິດກະສິກຳຫຼາຍກວ່າໝູ່ ດ້ວຍຄ່າສຳປະສິດສະຫະສຳພັນ 0.875 ແລະ ລາຍໄດ້ຈາກການເຮັດສວນປູກຢາງພາລາ, ລາຍໄດ້ຈາກເງິນເດືອນ, ລາຍໄດ້ຈາກຄ່າແຮງງານລາຍວັນ ແລະ ລາຍໄດ້ອື່ນໆ ມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01; ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງ, ສະໝູນໄພ ແລະ ລາຍໄດ້ຈາກການຕ່ຳຫູກ, ຖັກແສ່ວ, ເຄື່ອງນຸ່ງ, ມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ສ່ວນສຳລັບລາຍໄດ້ຈາກການເຮັດນາ ແລະ ລາຍໄດ້ຈາກການເຮັດໄຮ່, ລາຍໄດ້ຈາກການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ ແລະ ການດຳເນີນກິດຈະການບໍລິການສ້ອມແປງທຸກຊະນິດ ມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ 0.1 ແລະ ເມື່ອວິເຄາະປຽບທຽບແລ້ວເຫັນວ່າ ໂຄງສ້າງລາຍໄດ້ຈາກການຜະລິດກະສິກຳ ມີອັດຕາສ່ວນຄວາມສຳພັນຕໍ່ການກະຈາຍລາຍໄດ້ສູງກວ່າໝູ່ຄື 27.5% ເຖິງແມ່ນວ່າລາຍໄດ້ສະເລ່ຍຈາກການຜະລິດກະສິກຳຈະມີໜ້ອຍກວ່າຂະແໜງການອື່ນໆກໍ່ຕາມ.

**ຄຳສັບສຳຄັນ:** *ຄົວເຮືອນ, ໂຄງສ້າງລາຍໄດ້, ການກະຈາຍລາຍໄດ້, ສຳປະສິດ Gini coefficient*

# The Analyze of relationship between income structure and household income distribution of the people Namor District, Oudomxay Province.

**Chanhmany CHANHTANGUEN [1]*, Bounthavy SIPHANTHONG[1], Soutthavone SIOUDOMPHAN[1], Chansamone SENGDARA[1]**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

[1*]***Correspondence:***
*Chanhmany CHANHTANGEUN, Statistics Division, Department of Planing and Investment of Province, Tel: 020 23964445, E-mail: chanhmany.ch@lsb.gov.la*
[2]*Department of Economics Faculty of Economics and Tourism Souphanouvong University*

***Article Info:***
*Submitted: Apr 03, 2023*
*Revised: May 09, 2023*
*Accepted: May 21, 2023*

## Abstract

The research entitled "An analysis of the relationship between income structure and distribution of household income of the people of Namor District, Oudomxay Province" aims to analyze the distribution of household income with a sample group of 224 households using Gini coefficient statistics to analyze the data. The results showed that the average household member is 7. The majority of household members’ age is under 20 years old. Most of them are married and have completed primary and secondary education. The members that can generate income for a family is around 3-4 people. The main household economic activity is agricultural production. The main purpose of agriculture is to consume and sell to the locals. The average income is between 8,000,000-150,000,000 LAK. Through the analysis of the relationship between the income structure of each sector and the total income, it showed that the total income is related or depends on the income from the agricultural production more than others with a correlation coefficient of 0.875 and the income from rubber plantations, income from salary, income from daily labor and other income (i.e. income from lottery) have an effect on the equality of income distribution with a statistical significance level at 0.01. The income from the sale of forest products of Dong and herbal medicine and income from weaving clothing, has an effect on the equality of income distribution with the statistical significance level at 0.05. In terms of the income from farming, industrial-craft production and all types of repair service operations, they affect the equality of income distribution with the statistical significance level at 0.1, and it can also be seen that the structure of income from agricultural production has the highest correlation ratio to income distribution, which is 27.5%, even though the average income from agricultural production is less than other sectors.

**Keywords:** *Household, income structure, income distribution, Gini coefficient*

## 1. ພາກສະເໜີ

ປັດໄຈສຳຄັນປັດໄຈໜຶ່ງຂອງການພັດທະນາລະບົບເສດຖະກິດຄື ການມີການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ວັດດ້ວຍການເພີ່ມຂຶ້ນຂອງລາຍໄດ້ແຫ່ງຊາດ (Gross National Income: GNI) ທີ່ສູງ ແລະ ຕໍ່ເນື່ອງ ແນວໃດກໍ່ຕາມ ເລື່ອງຂອງການພັດທະນາເສດຖະກິດບໍ່ຈຳກັດສະເພາະວິທີການຈະເຮັດໃຫ້ລາຍໄດ້ແຫ່ງຊາດເພີ່ມຂຶ້ນຫາກແຕ່ລວມເຖິງການກະຈາຍລາຍໄດ້ປະໂຫຍດຂອງການຈະເລີນເຕີບໂຕດັ່ງກ່າວ, ຄວາມບໍ່ສະເໝີພາບທາງດ້ານລາຍໄດ້ຖືເປັນບັນຫາຫລັກຂອງການພັດທະນາ ແລະ ຍັງເປັນປັດໄຈສຳຄັນທີ່ຖືກອະທິບາຍເຖິງຄວາມທຸກຍາກຢູ່ສະເໝີ ບັນຫາໜຶ່ງທີ່ເກີດຂຶ້ນຕາມມາກໍ່ຄື ການຂາດປະສິດທິ ພາບທາງດ້ານເສດຖະກິດ ສັງຄົມມີບໍ່ສະເໝີພາບລະຫວ່າງລາຍໄດ້ເຮັດໃຫ້ປະຊາກອນສາມາດສາມາດເຂົ້າເຖິງເງິນທຶນໃນສັດສ່ວນທີ່ຕໍ່າ ບໍ່ມີການລົງທຶນໃນການສຶກສາ ແລະ ສຸຂະພາບຜົນໄດ້ຮັບຄືການບໍ່ສາມາດອອກຈາກວົງຈອນຄວາມທຸກຍາກໄດ້ ນອກຈາກນັ້ນຄວາມບໍ່ສະເໝີພາບດ້ານລາຍໄດ້ທີ່ສູງສາມາດນຳໄປສູ່ຄວາມແຕກຕ່າງ ຂອງປະເດັນອື່ນໆໃນອານາຄົດ ທັງເປັນປະເດັນທີ່ເປັນທາງເສດຖະສາດຢ່າງການຄອບຄອງທີ່ດິນ ແລະ ອະສັງຫາລິມະຊັບ ລວມໄປເຖິງປະເດັນທີ່ບໍ່ເປັນເສດຖະສາດຢ່າງສະຖານະທາງສັງຄົມ ແລະ ການມີສ່ວນຮ່ວມທາງການເມືອງ (Seers, 1969; Todaro & Smith, 2009).

ເມືອງນາໝໍ້ ແຂວງອຸດົມໄຊ ເປັນເມືອງໜຶ່ງທີ່ເປັນປັດໄຈສຳຄັນຕໍ່ກັບການພັດທະນາເສດຖະກິດຂອງແຂວງ ເນື່ອງຈາກວ່າ ແຂວງອຸດົມໄຊ ເປັນແຂວງໜຶ່ງທີ່ມີທ່າແຮງໄດ້ປຽບທາງດ້ານທີ່ຕັ້ງພູມສັນຖານທີ່ຕັ້ງຢູ່ໃຈກາງການເຊື່ອມຈອດ-ເຊື່ອມຕໍ່ບັນດາແຂວງພາກເໜືອ ແລະ ບັນດາປະເທດໃກ້ຄຽງ ທີ່ເສດຖະກິດມີການຂະຫຍາຍຕົວຢ່າງແຂງແຮງ ແລະຕໍ່ເນື່ອງໃນ 5 ປີ (2016-2021) ເສດຖະກິດຂອງແຂວງສະແດງອອກຄື: ປີ 2016 ຂະຫຍາຍຕົວ 7.76%; ປີ 2017 ຂະຫຍາຍຕົວ 7.78%; ປີ 2018 ຂະ ຫຍາຍຕົວ 7.01% ແລະ ປີ 2020 ຂະຫຍາຍຕົວ 4.22%. ໂດຍສະເລ່ຍ ໃນ 5 ປີ ລວມຍອດພະລິດຕະພັນພາຍໃນ (GDP) ຂະຫຍາຍຕົວໃນລະດັບສະເລ່ຍ 6.95% (ບົດສະ ຫຼຸບແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ VIII, 2016-2020). ແຕ່ເມື່ອວັດຄ່າສຳປະສິດ Gini coefficient ຊຶ່ງແມ່ນການວັດແທກຄວາມບໍ່ສະເໝີພາບ ເພີ່ມຂຶ້ນຈາກ 36.2% ໃນປີ 2012 ມາເປັນ 38.8% ໃນປີ 2018. (World Bank, 2018) ນັ້ນໝາຍຄວາມວ່າແຂວງ ມີອັດຕາການຈະເລີນເຕີບໂຕທາງເສດຖະກິດສູງພໍສົມຄວນ ແຕ່ຜົນຂອງການຈະເລີນເຕີບໂຕທາງເສດຖະກິດນັ້ນ ບໍ່ໄດ້ແຈກຢາຍຜົນປະໂຫຍດໃຫ້ປະຊາຊົນຢ່າງສະເໝີພາບ.ຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງເມືອງນາໝໍ້ ຍັງເປັນບັນຫາທີສຳຄັນ ແລະ ຈຳເປັນຕ້ອງແກ້ໄຂໂດຍສະເພາະແມ່ນແຫຼ່ງລາຍໄດ້ຂອງປະຊາຊົນຍັງມີຄວາມແຕກຕ່າງກັນຈຶ່ງເຮັດໃຫ້ການກະຈາຍລາຍໄດ້ບໍ່ມີຄວາມສະເໝີພາບ, ມີຄວາມແຕກຕ່າງລະຫວ່າງລາຍໄດ້ຂອງອາຊີບທີ່ແຕກຕ່າງກັນໃນແຕ່ລະຄົວເຮືອນຈຶ່ງເກີດມີຄວາມແຕກຕ່າງລະຫວ່າງຄົວເຮືອນທີ່ມີລາຍໄດ້ສູງ ແລະ ຄົວເຮືອນທີ່ມີລາຍໄດ້ຕໍ່າ. ເພື່ອຢາກຮູ້ວ່າການກະຈາຍລາຍຂອງຄົວເຮືອນພາຍໃນເມືອງມີຄວາມສະເໝີພາບກັນ ຫຼື ບໍ່.

ເພື່ອເປັນການເຮັດໃຫ້ ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈ ກຸ່ມຜູ້ວິໄຈໄດ້ມີຈຸດປະສົງຂອງການຄົ້ນຄວ້າ ເພື່ອ 1) ສຶກສາໂຄງສ້າງລາຍໄດ້ພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ 2) ວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້, ແຂວງອຸດົມໄຊ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ໃນການສຶກສາວິໄຈຄັ້ງນີ້ ຈະເປັນການສຶກສາແບບປະລິມານ (Quantitative Research), ໂດຍນຳໃຊ້ຂໍ້ມູນມູນ ແບບປະຖົມພູມ (primary data) ໃຊ້ແບບສອບຖາມເຂົ້າໃນການລົງເກັບກຳຂໍ້ມູນຈາກກຸ່ມຕົວຢ່າງ 224 ຄົວເຮືອນ ເຂົ້ານຳໃຊ້ໃນການສຶກສາ, ການອະທິບາຍຜົນຂອງການສຶກສາໃນຄັ້ງນີ້.

### 2.2 ການຮວບຮວມຂໍ້ມູນ

ຂໍ້ມູນທັງໝົດຈະແມ່ນມີລັກສະນະເປັນ ຂໍ້ມູນປະຖົມພູມ (Primary Data) ເຊິ່ງຂໍ້ມູນທີ່ຜູ້ສຶກສາໄດ້ຮວບຮວມ

ມານຳໃຊ້ເຂົ້າໃນການວິເຄາະຄັ້ງນີ້ປະກອບມີ: ແມ່ນຂໍ້ມູນປະເພດໜຶ່ງທີ່ນິຍົມກັນໃຊ້ຫຼາຍ ແລະ ຍັງເປັນຂໍ້ມູນທີ່ມີຄວາມຊັດເຈນສູງ ເຊິ່ງເກັບກຳມາຈາກຫຼາຍໆແຫຼ່ງ ເຊັ່ນ: ແບບສອບຖາມ, ແບບສຳພາດ, ສຳຫຼວດ ແລະ ແບບສັງເກດ. ການສຶກສາໃນຄັ້ງນີ້ແມ່ນຈະໃຊ້ແບບສອບຖາມເຂົ້າໃນການລົງເກັບກຳຂໍ້ມູນຈາກກຸ່ມຕົວຢ່າງທີ່ໄດ້ກຳນົດໄວ້ເຊິ່ງລວມມີ 10 ບ້ານ ມີຈຳນວນຄົວເຮືອນຕົວຢ່າງ 224 ຄົວເຮືອນ.

### 2.3 ການວິເຄາະຂໍ້ມູນ

ການສຶກສາຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ໂດຍໃຊ້ກຸ່ມຕົວຢ່າງ 224 ຄົວເຮືອນ ເພື່ອວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຜະລິດກະສິກຳ, ລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳ, ລາຍໄດ້ຈາກການຄ້າ ແລະ ບໍລິການ ແລະ ລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ ກັບສຳປະສິດການກະຈາຍລາຍໄດ້ (Gini Coefficient) ວ່າມີລາຍໄດ້ຈາກສ່ວນໃດແດ່ທີ່ຈະມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ ໂດຍນຳໃຊ້ສະຖິຕິທົດສອບຄວາມສຳພັນ Pearson Chi-Square, ສຳປະສິດສະຫະສຳພັນ (Correlations), ສຳປະສິດຮ່ວມ (Coefficient of variation: CV) ແລະ ສຳປະສິດ Gini ໃນການວິເຄາະວິເຄາະຂໍ້ມູນ. ດ້ວຍລະດັບຄວາມເຊື່ອໝັ້ນ 90%, 95% ແລະ 99% ໂດຍການວິເຄາະຜ່ານໂປຣແກມທາງສະຖິຕິ (SPSS Version 22) ໂດຍກຳນົດຄ່າລະດັບຄວາມສຳຄັນທາງດ້ານສະຖິຕິຄື *sig ≤ 0.1 **sig ≤ 0.05 ***sig ≤0.01.

## 3. ຜົນໄດ້ຮັບ

ຜ່ານການສຶກສາໂຄງສ້າງລາຍໄດ້ລວມຂອງພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊຈຳນວນທັງໝົດ ຄົວເຮືອນ ພົບວ່າ: ປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ໃນຈຳນວນ 224 ຄົວເຮືອນ ມີລາຍໄດ້ລວມທັງໝົດເທົ່າກັບ 34,196,424,500 ກີບ ໂດຍສະເລ່ຍແມ່ນ 152,662,609 ກີບ/ຄົວເຮືອນ. ເຊິ່ງໃນນັ້ນລາຍໄດ້ມາຈາກການຜະລິດກະສິກຳ ມູນຄ່າ 8,848,704,500 ກີບ ກວມເອົາ 25.9% ໂດຍສະເລ່ຍແລ້ວເທົ່າກັບ 39,503,145 ກີບ/ຄົວເຮືອນ; ການຜະລິດອຸດສາຫະກຳ ແລະ ຫັດຖະກຳ ມູນຄ່າ 4,168,700,000 ກີບ ກວມເອົາ 12.2% ໂດຍສະເລ່ຍແລ້ວເທົ່າກັບ 18,610,268 ກີບ/ຄົວເຮືອນ; ການຄ້າ ແລະ ການບໍລິການ ມູນຄ່າ 6,993,900,000 ກີບ/ປີ ກວມເອົາ 20.5% ໂດຍສະເລ່ຍແລ້ວເທົ່າກັບ 31,222,768 ກີບ/ຄົວເຮືອນ ແລະ ລາຍໄດ້ຈາກແຮງງານ, ເງິນເດືອນ, ຊັບສິນບັດ ແລະ ອື່ນໆ ມູນຄ່າ 14,185,120,000 ກີບ/ປີ ກວມເອົາ 41.5% ໂດຍສະເລ່ຍແລ້ວເທົ່າກັບ 63,326,429 ກີບ/ຄົວເຮືອນ/ປີ ຕາຕະລາງ 1.1.

ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຜະລິດກະສິກຳ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ: ຈາກໂຄງສ້າງລາຍໄດ້ຈາກການຜະລິດກະສິກຳທັງໝົດ 8 ລາຍການ ມີພຽງ 4 ລາຍການເທົ່ານັ້ນທີ່ມີຄວາມສຳພັນກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເຊິ່ງປະກອບມີ: ລາຍໄດ້ຈາກການເຮັດສວນປູກຢາງພາລາ ມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 16.13 ແລະ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.01; ເຄື່ອງປ່າຂອງດົງ ແລະ ສະໝູນໄພ ມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 10.91 ແລະ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.05; ສຳລັບລາຍໄດ້ຈາກການເຮັດນາ ແລະ ເຮັດໄຮ່ ມີຄ່າສະຖິຕິທົດສອບ ເທົ່າກັບ 8.89 ແລະ 7.49 ຕາມລຳດັບ ແລະ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.1. ນັ້ນໝາຍຄວາມວ່າ ລາຍໄດ້ຈາກການເຮັດສວນປູກຢາງພາລາ, ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງ ແລະ ສະໝູນໄພ, ລາຍໄດ້ຈາກການເຮັດນາ ແລະ ລາຍໄດ້ຈາກການເຮັດໄຮ່ ແມ່ນມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ດ້ວຍລະດັບຄວາມເຊື່ອໝັ້ນ 90%, 95% ແລະ 99% ຕາມລຳດັບ. ເຊິ່ງສະແດງໃຫ້ເຫັນໄດ້ວ່າ ລາຍໄດ້ຈາກການເຮັດສວນປູກຢາງພາລາ, ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງ ແລະ ສະໝູນໄພ, ລາຍໄດ້ຈາກການເຮັດນາ ແລະ ລາຍໄດ້ຈາກການເຮັດໄຮ່ ມີຄວາມແຕກຕ່າງກັນລະຫວ່າງຄົວເຮືອນຫຼາຍ

ເທົ່າໃດ ກໍ່ຈະສົ່ງຜົນໃຫ້ການກະຈາຍລາຍໄດ້ມີຄວາມແຕກຕ່າງກັນຫຼາຍເຊັ່ນດຽວກັນ. ສ່ວນສຳລັບ ລາຍໄດ້ຈາກການເຮັດຈາກການເຮັດສວນປູກພືດຜັກຕ່າງໆ, ການລ້ຽງສັດ, ປະມົງ ແລະ ລ້ຽງສັດນ້ຳ ແລະ ການຜະລິດກະສິກຳອື່ນໆ ແມ່ນບໍ່ມີຄວາມສຳພັນ ຫຼື ບໍ່ມີຜົນຕໍ່ກັບການກະຈາຍໄດ້ພາກຄົວເຮືອນຂອງປະຊາຊົນ. ລາຍລະອຽດຜົນຂອງການວິເຄາະ ຕາຕະລາງ 1.2.

ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ: ຈາກໂຄງສ້າງລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳ ທັງໝົດ 4 ລາຍການ ມີພຽງ 2 ລາຍການເທົ່ານັ້ນທີ່ມີຄວາມສຳພັນກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເຊິ່ງປະກອບມີ: ລາຍໄດ້ຈາກການຕໍ່າຫູກ, ຖັກແສ່ວ, ເຄື່ອງນຸ່ງມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 9.78 ແລະ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ລາຍໄດ້ຈາກການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ ມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 3.07 ແລະ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.1. ນັ້ນໝາຍຄວາມວ່າ ລາຍໄດ້ຈາກການຕໍ່າຫູກ, ຖັກແສ່ວ, ເຄື່ອງນຸ່ງ ແລະ ລາຍໄດ້ຈາກການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ ແມ່ນມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແລະ 90% ຕາມລຳດັບ. ເຊິ່ງສະແດງໃຫ້ເຫັນໄດ້ວ່າ ລາຍໄດ້ຈາກການຕໍ່າຫູກ, ຖັກແສ່ວ, ເຄື່ອງນຸ່ງ ແລະ ລາຍໄດ້ຈາກການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ ມີຄວາມແຕກຕ່າງກັນລະຫວ່າງຄົວເຮືອນຫຼາຍເທົ່າໃດ ກໍ່ຈະສົ່ງຜົນໃຫ້ການກະຈາຍລາຍໄດ້ມີຄວາມແຕກຕ່າງກັນຫຼາຍເຊັ່ນດຽວກັນ. ສ່ວນສຳລັບ ລາຍໄດ້ຈາກການຜະລິດເຄື່ອງດື່ມທີ່ເປັນທາດເຫຼົ້າ ແລະ ການຜະລິດເຄື່ອງປັ້ນດິນເຜົາ ແມ່ນບໍ່ມີຄວາມສຳພັນ ຫຼື ບໍ່ມີຜົນຕໍ່ກັບການກະຈາຍໄດ້ພາກຄົວເຮືອນຂອງປະຊາຊົນ. ລາຍລະອຽດຜົນຂອງການວິເຄາະ ຕາຕະລາງ 1.3.

ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກລາຍໄດ້ຈາກການຄ້າ ແລະ ບໍລິການ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ: ຈາກໂຄງສ້າງລາຍໄດ້ຈາກລາຍໄດ້ຈາກການຄ້າ ແລະ ບໍລິການທັງໝົດ 6 ລາຍການ ມີພຽງ 3 ລາຍການເທົ່ານັ້ນທີ່ມີຄວາມສຳພັນກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເຊິ່ງປະກອບມີ: ລາຍໄດ້ຈາກການດຳເນີນກິດຈະການບໍລິການດ້ານການເງິນ ແລະ ເງິນຝາກ ແລະ ການດຳເນີນກິດຈະການຮ້ານຂາຍເຄື່ອງຍົກ ແມ່ນມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 8.23 ແລະ 8.11 ຕາມລຳດັບ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.01; ສຳລັບການດຳເນີນກິດຈະການບໍລິການສ້ອມແປງທຸກຊະນິດ ແມ່ນມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບ ເທົ່າກັບ 8.52 ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.1; ເຊິ່ງສະແດງໃຫ້ເຫັນໄດ້ວ່າ ລາຍໄດ້ຈາກການດຳເນີນກິດຈະການບໍລິການດ້ານການເງິນ ແລະ ເງິນຝາກ ແລະ ການດຳເນີນກິດຈະການຮ້ານຂາຍເຄື່ອງຍົກ ແລະ ລາຍໄດ້ຈາກການດຳເນີນກິດຈະການບໍລິການສ້ອມແປງທຸກຊະນິດ ມີຄວາມແຕກຕ່າງກັນລະຫວ່າງຄົວເຮືອນຫຼາຍເທົ່າໃດ ກໍ່ຈະສົ່ງຜົນໃຫ້ການກະຈາຍລາຍໄດ້ມີຄວາມແຕກຕ່າງກັນຫຼາຍເຊັ່ນດຽວກັນ. ສ່ວນລາຍໄດ້ຈາກການດຳເນີນກິດຈະການຮ້ານຂາຍເຄື່ອງຍ່ອຍ, ກິດຈະການບໍລິການທີ່ພັກ ແລະ ອາຫານ ແລະ ກິດຈະການບໍລິການອື່ນໆ ແມ່ນບໍ່ມີຄວາມສຳພັນ ຫຼື ມີຜົນຕໍ່ກັບການກະຈາຍໄດ້ພາກຄົວເຮືອນຂອງປະຊາຊົນ. ລາຍລະອຽດຜົນຂອງການວິເຄາະຕາຕະລາງ 1.4.

ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກລາຍໄດ້ຈາກລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ: ຈາກໂຄງສ້າງລາຍໄດ້ຈາກລາຍໄດ້ຈາກການຄ້າ ແລະ ບໍລິການທັງໝົດ 6 ລາຍການ ມີພຽງ 3 ລາຍການເທົ່ານັ້ນ

ທີ່ມີຄວາມສຳພັນກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເຊິ່ງປະກອບມີ: ລາຍໄດ້ຈາກເງິນເດືອນ, ລາຍໄດ້ຈາກຄ່າແຮງງານລາຍວັນ ແລະ ລາຍໄດ້ອື່ນໆ (ລາຍໄດ້ຈາການຖືກຫວຍ) ແມ່ນມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ ເຊິ່ງມີຄ່າສະຖິຕິທົດສອບເທົ່າກັບ 27.32, 14.24 ແລະ 16.17 ຕາມລຳດັບ ດ້ວຍຄ່າລະດັບຄວາມສຳຄັນທາງສະຖິຕິ 0.01; ນັ້ນໝາຍຄວາມວ່າ ລາຍໄດ້ຈາກເງິນເດືອນ, ລາຍໄດ້ຈາກຄ່າແຮງງານລາຍວັນ ແລະ ລາຍໄດ້ອື່ນໆ (ລາຍໄດ້ຈາການຖືກຫວຍ) ແມ່ນມີຜົນຕໍ່ຄວາມສະເໝີພາບຂອງການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ດ້ວຍລະດັບຄວາມເຊື່ອໝັ້ນ 99%. ເຊິ່ງສະແດງໃຫ້ເຫັນໄດ້ວ່າ ລາຍໄດ້ຈາກເງິນເດືອນ, ລາຍໄດ້ຈາກຄ່າແຮງງານລາຍວັນ ແລະ ລາຍໄດ້ອື່ນໆ (ລາຍໄດ້ຈາການຖືກຫວຍ) ມີຄວາມແຕກຕ່າງກັນລະຫວ່າງຄົວເຮືອນຫຼາຍເທົ່າໃດ ກໍ່ຈະສົ່ງຜົນໃຫ້ການກະຈາຍລາຍໄດ້ມີຄວາມແຕກຕ່າງກັນຫຼາຍເຊັ່ນດຽວກັນ. ສ່ວນລາຍໄດ້ຈາກເງິນອຸດໜູນ, ລາຍໄດ້ຈາກເງິນບໍານານ ແລະ ລາຍໄດ້ຈາກການໃຫ້ເຊົ່າຊັບສິນບັດແມ່ນບໍ່ມີຄວາມສຳພັນກັບການກະຈາຍໄດ້ພາກຄົວເຮືອນຂອງປະຊາຊົນ. ລາຍລະອຽດຜົນຂອງການວິເຄາະ ຕາຕະລາງ 1.5.

## 4. ວິພາກຜົນ

ຜົນການສຶກສາຂໍ້ມູນທົ່ວໄປຂອງພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ ໂດຍສ່ວນໃຫຍ່ຈະເປັນຄົວເຮືອນທີ່ມີສະມາຊິກ 7 ຄົນຂຶ້ນໄປ ແລະ ລະດັບການສຶກສາຈົບຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນເປັນສ່ວນຫຼາຍ; ໂດຍສະເລ່ຍແລ້ວຄົວເຮືອນໜຶ່ງຈະມີສະມາຊິກຜູ້ທີ່ສາມາດສ້າງລາຍໄດ້ໃຫ້ກັບຄົວເຮືອນຢູ່ປະມານ 3-4 ຄົນ ເຊິ່ງປະກອບອາຊີບເຮັດການຜະລິດກະສິກໍາ, ພະນັກງານລັດ ແລະ ຄ້າຂາຍ. ການດໍາເນີນກິດຈະກໍາຫຼັກທາງເສດຖະກິດພາກຄົວເຮືອນຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ໂດຍສ່ວນໃຫຍ່ແມ່ນການຜະລິດກະສິກໍາເຮັດສວນປູກຢາງພາລາ, ການລ້ຽງສັດ, ເຮັດນາ ແລະ ອື່ນໆ; ສໍາລັບດ້ານການຄ້າ ແລະ ການບໍລິການປະກອບມີ: ກິດຈະການຮ້ານຂາຍເຄື່ອງຍ່ອຍ, ກິດຈະການດ້ານການບໍລິການທີ່ພັກ ແລະ ອາຫານ; ຊຶ່ງສອດຄ່ອງກັບຜົນການສຶກສາຂອງ Nuktreepong (2018) ທີ່ສຶກສາກ່ຽວກັບ A Case Study Comparing the spread of incomes in households of 2 villages; Moo 2, Talay Noi Village and Moo 7, Hua Kiaow Village, both located in Talay Noi Sub-District, Khuan Khanun District, Patthallung Province. ທີ່ວ່າ ກິດຈະກໍາທາງເສດຖະກິດພາກຄົວເຮືອນໂດຍສ່ວນໃຫຍ່ແມ່ນການຜະລິດກະສິກໍາ ແລະ ຈໍານວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄົວເຮືອນຢູ່ລະຫວ່າງ 3-4 ຄົນ.

ຈາກການວິເຄາະວິເຄາະຄວາມສໍາພັນລະຫວ່າງໂຄງສ້າງລາຍໄດ້ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ: ໂຄງສ້າງລາຍໄດ້ຈາກການຜະລິດກະສິກໍາມ, ໂຄງສ້າງລາຍໄດ້ຈາກການຜະລິດອຸດສາຫະກໍາ ແລະ ຫັດຖະກໍາ , ໂຄງສ້າງລາຍໄດ້ຈາກລາຍໄດ້ຈາກການຄ້າ ແລະ ບໍລິການ ແລະ ໂຄງສ້າງລາຍໄດ້ຈາກລາຍໄດ້ຈາກລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ ແມ່ນມີຄວາມສໍາພັນກັບການກະຈາຍລາຍໄດ້ໃນທິດທາງດຽວກັນ. ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Hengpatana, Patmasiriwat & Ratchatapibhunphob (2019) ທີ່ສຶກສາເລື່ອງ Income and Asset Distribution in Thailand: An Analysis of Inequality Classified by Socioeconomic Class ທີ່ວ່າການກະຈາຍລາຍໄດ້ ແລະ ລາຍໄດ້ມີຄວາມແຕກຕ່າງກັນຕາມກຸ່ມອາຊີບ ເຊິ່ງຄົວເຮືອນທີ່ປະກອບອາຊີບທຸລະກິດການຄ້າ ແລະ ການບໍລິ ການຈະມີລາຍໄດ້ສູງ; ສ່ວນຄົວເຮືອນທີ່ປະກອບກິດຈະ ການຜະລິດກະສິກໍາແມ່ນມີລາຍໄດ້ຕໍ່າ.

## 5. ສະຫຼຸບ

ຜົນການສຶກສາຂໍ້ມູນທົ່ວໄປຂອງພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ ພົບວ່າ ມີສະມາຊິກໃນຄົວເຮືອນລວມທັງໝົດ 1,340 ຄົນ, ໃນນັ້ນ ເພດຊາຍຫຼາຍກວ່າເພດຍິງ. ໂດຍສ່ວນໃຫຍ່ຈະເປັນຄົວເຮືອນທີ່ມີສະມາຊິກ 7 ຄົນ, ສະມາຊິກໃນຄົວເຮືອນແມ່ນມີອາຍຸຕໍ່າກວ່າ 20 ປີ, ມີສະຖານະພາບທີ່ແຕ່ງງານແລ້ວ ແລະ ລະດັບການສຶກສາຈົບຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນເປັນສ່ວນຫຼາຍ, ສ່ວນໃຫຍ່ສະມາຊິກສາມາດສ້າງລາຍໄດ້ໃຫ້ກັບຄົວເຮືອນ, ໂດຍສະເລ່ຍແລ້ວຄົວເຮືອນໜຶ່ງຈະມີ

ສະມາຊິກຜູ້ທີ່ສາມາດສ້າງລາຍໄດ້ໃຫ້ກັບຄົວເຮືອນຢູ່ປະມານ 3-4 ຄົນ ເຊິ່ງປະກອບອາຊີບເຮັດການຜະລິດກະສິກຳ ແລະ ເປັນພະນັກງານລັດ.

ໂຄງສ້າງລາຍໄດ້ຈາກການຜະລິດກະສິກຳມີຄວາມສຳພັນ ຫຼື ມີຜົນຕໍ່ຄວາມສະເໝີພາບດ້ານການກະຈາຍລາຍໄດ້ຂອງພາກຄົວເຮືອນຢູ່ 3 ດ້ານຄື: ລາຍໄດ້ຈາກການເຮັດສວນປູກຢາງພາລາ, ລາຍໄດ້ຈາກການຂາຍເຄື່ອງປ່າຂອງດົງ, ສະໝູນໄພ, ລາຍໄດ້ຈາກການເຮັດນາ ແລະ ລາຍໄດ້ຈາກການເຮັດໄຮ່, ລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳ ມີຄວາມສຳພັນ ຫຼື ມີຜົນຕໍ່ຄວາມສະເໝີພາບດ້ານການກະຈາຍລາຍໄດ້ຂອງພາກຄົວເຮືອນຢູ່ 2 ດ້ານຄື: ລາຍໄດ້ຈາກການຕໍ່າຫູກ, ຖັກແສ່ວ, ເຄື່ອງນຸ່ງ ແລະ ລາຍໄດ້ຈາກການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ ການກະຈາຍລາຍໄດ້ຂອງພາກຄົວເຮືອນຢູ່ 3 ດ້ານຄື: ລາຍໄດ້ຈາກການດຳເນີນກິດຈະການບໍລິການດ້ານການເງິນ ແລະ ເງິນຝາກ, ລາຍໄດ້ຈາກການດຳເນີນກິດຈະການຮ້ານຂາຍເຄື່ອງຍົກ, ການດຳເນີນກິດຈະການບໍລິການສ້ອມແປງທຸກຊະນິດ ແລະ ໂຄງສ້າງລາຍໄດ້ຈາກລາຍໄດ້ຈາກລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ ມີຄວາມສຳພັນ ຫຼື ມີຜົນຕໍ່ຄວາມສະເໝີພາບດ້ານການກະຈາຍລາຍໄດ້ຂອງພາກຄົວເຮືອນຢູ່ 3 ດ້ານຄື: ລາຍໄດ້ຈາກເງິນເດືອນ, ລາຍໄດ້ຈາກຄ່າແຮງງານລາຍວັນ ແລະ ລາຍໄດ້ອື່ນໆ (ລາຍໄດ້ຈາການຖືກຫວຍ) ແມ່ນມີຄວາມສຳພັນກັບການກະຈາຍລາຍໄດ້ໃນທິດທາງດຽວ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າ ມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Abdel-Ghany, M., & Thoma, S. J. (2002). Distribution of household income in America: Effects of source of income, inflation, and cost of living differentials. Social Indicators Research, 60(1/3), pp. 281-297.

Adams, R. H. (1995). Agricultural income, cash crops, and inequality in rural Pakistan.Economic Development and Cultural Change, *43*(3), pp. 467-491.

Adams, R. H. (1993). Non-farm income and inequality in rural Pakistan. The Pakistan Development Review, 32(4), pp. 1187-1198.

Buntham ladhak. (2005). Economics and Taxation of Thailand (1[st] edition). Bangkok: Ramkhamhaeng University.

Bellu, L. G. and P. Liberati. (2006) . "Inequality analysis: The Gini index." EASYPol Module 040: Food and Agriculture Organization of the United Nations.

Chattaya Pholsri, (1990). Theory and principles of community development, Bangkok, Thailand.

Hengpatana, S., Direk Patmasiriwat. D., & Ratchatapibhunphob. P. (2019). Income and Asset Distribution in Thailand: An Analysis of Inequality Classified by Socioeconomic Class, Journal of Economics and Management Strategy, Vol. 6, No. 1, January – June 2019. P: 35-48.

Ibsirimethi, S. (2001). Distribution of household income at the regional level in Thailand Bachelor's Degree in Economics, Bandit of Business Economics, Bandit of Business University.

Kairuna, A. (2008). Changing the pattern of distribution of income from the development of the country, Chapter Research report, Chiang Mai University.

Lerman, R. I., & Yitzhaki, S. (1985). Income inequality effects by income source: A new approach and applications to the United States. The review of Economics and Statistics, *67*(1), pp. 151-156.Seers, D. (1969). The meaning of development. Brighton: Institute of Development.

Niparat Nuktreepong, N. (2018). A Case Study Comparing the spread of incomes in

households of 2 villages; Moo 2, Talay Noi Village and Moo 7, Hua Kiaow Village, both located in Talay Noi Sub-District, Khuan Khanun District, Patthallung Province, Thon Buri University Academic Journal, Year 12, Issue 29, September - December 2018, p:194-202.

Pommasone, P. (2014) studied income distribution and poverty in 3 Northern Provinces: Phong Sali, LuangNamtha and Bokeo Provinces, Bachelor's Degree Program, Department of Economics, Faculty of Economics and Business Administration, National University.

Shorrocks, A. F. (1982). Inequelity decomposition by factor components. Econometrica, 50(1), pp. 193-211.

SomSanit, (2002). Development and poverty. Information dissemination seminar document flourish in Thailand. Ambassador Hotel Chom Thien, Chonburi District.

Summary of the 8 th 5 - year socio-economic development plan, 2016-2020 of Oudomxay Province.

Songsom, A. (2009). Household Economy in Pattani Province under the Southern Unrest, Academic Journal of the Faculty of Humanities and Social Sciences, Year 5 Issue 2 July - Dec. 2009, p:37-70.

Studies. Todaro, M. P. and S. C. Smith. (2009). Economic development. Harlow: Pearson Education Limited.

Soukavong et al. (2022). The Effect of Border Trade on Income Distribution Case study: Thaphabath District, Bolikhamxai Province, Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 1-10.

World Bank and Lao Statistics Bureau. (2020). “Poverty Profile in Lao PDR: Poverty Report for Lao Consumption an Expenditure Survey 2018-2019”Paper. 20 The World Bank.Washington DC.

ຕາຕະລາງ 1.1 ສັງລວມລາຍໄດ້ທັງໝົດ ແລະ ລາຍໄດ້ສະເລ່ຍຕໍ່ປີ ຂອງພາກຄົວເຮືອນ.

| ແຫຼ່ງລາຍໄດ້ | ມູນຄ່າ (ກີບ) | ເປີເຊັນ | ສະເລ່ຍຕໍ່ຄົວເຮືອນ/ປີ |
|---|---|---|---|
| ການຜະລິດກະສິກຳ | 8,848,704,500 | 25.9 | 39,503,145 |
| ການຜະລິດອຸດສາຫະກຳ ແລະ ຫັດຖະກຳ | 4,168,700,000 | 12.2 | 18,610,268 |
| ການຄ້າ ແລະ ການບໍລິການ | 6,993,900,000 | 20.5 | 31,222,768 |
| ແຮງງານ, ເງິນເດືອນ, ຊັບສິນບັດ ແລະ ອື່ນໆ | 14,185,120,000 | 41.5 | 63,326,429 |
| ລວມ | 34,196,424,500 | 100 | 152,662,609 |

ແຫຼ່ງຂໍ້ມູນ: ຈາກການເກັບຂໍ້ມູນຕົວຈິງຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ ການວິເຄາະຂໍ້ມູນດ້ວຍໂປຣແກມວິເຄາະຂໍ້ມູນທາງສະຖິຕິ SPSS version 22.

ຕາຕະລາງ 1.2 ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຜະລິດກະສິກຳ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ.

| ລາຍໄດ້ຈາກການຜະລິດກະສິກຳ | ສຳປະສິດ Gini coefficient | | ສະຖິຕິທົດສອບ Pearson Chi-Square | ຄ່າລະດັບຄວາມສຳຄັນ Sig. (2-sided) |
|---|---|---|---|---|
| | 0.00 – 0.49 | 0.50 – 1.00 | | |
| ເຮັດນາ | 128 | 18 | 8.89* | 0.064 |

| | | | | |
|---|---|---|---|---|
| ເຮັດໄຮ່ | 33 | 8 | 7.49* | 0.058 |
| ເຮັດສວນປູກພືດຜັກຕ່າງໆ | 61 | 10 | 1.76 | 0.415 |
| ເຮັດສວນປູກຢາງພາລາ | 81 | 12 | 16.13*** | 0.001 |
| ລ້ຽງສັດ | 64 | 9 | 1.72 | 0.423 |
| ເຄື່ອງປ່າຂອງດົງ ແລະ ສະໝູນໄພ | 36 | 7 | 10.91** | 0.012 |
| ປະມົງ ແລະ ລ້ຽງສັດນ້ຳ | 19 | 3 | 0.95 | 0.813 |
| ການຜະລິດກະສິກຳອື່ນໆ | 1 | 2 | 3.19 | 0.813 |

ແຫຼ່ງຂໍ້ມູນ: ຈາກການເກັບຂໍ້ມູນຕົວຈິງຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ ການວິເຄາະຂໍ້ມູນດ້ວຍໂປຣແກມ ວິເຄາະຂໍ້ມູນທາງສະຖິຕິ SPSS version 22.

ຕາຕະລາງ 1.3 ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ.

| **ລາຍໄດ້ຈາກການຜະລິດອຸດສາຫະກຳ ແລະ ຫັດຖະກຳ** | **ສຳປະສິດ Gini coefficient** | | **ສະຖິຕິທົດສອບ Pearson Chi-Square** | **ຄ່າລະດັບຄວາມສຳຄັນ Sig. (2-sided)** |
|---|---|---|---|---|
| | **0.00 – 0.49** | **0.50 – 1.00** | | |
| ການຜະລິດເຄື່ອງດື່ມທີ່ເປັນທາດເຫຼົ້າ | 16 | 1 | 4.97 | 0.291 |
| ການຜະລິດເຄື່ອງປັ້ນດິນເຜົາ | 2 | 0 | 0.25 | 0.881 |
| ຕໍ່າຫູກ, ຖັກແສ່ວ, ເຄື່ອງນຸ່ງ | 4 | 2 | 9.78** | 0.021 |
| ການຜະລິດອຸດສາຫະກຳ-ຫັດຖະກຳອື່ນໆ | 1 | 1 | 3.07* | 0.080 |

ແຫຼ່ງຂໍ້ມູນ: ຈາກການເກັບຂໍ້ມູນຕົວຈິງຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ ການວິເຄາະຂໍ້ມູນດ້ວຍໂປຣແກມ ວິເຄາະຂໍ້ມູນທາງສະຖິຕິ SPSS version 22.

ຕາຕະລາງ 1.4 ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກການຄ້າ ແລະ ການບໍລິການ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ.

| **ລາຍໄດ້ຈາກການຄ້າ ແລະ ບໍລິການ** | **ສຳປະສິດ Gini coefficient** | | **ສະຖິຕິທົດສອບ Pearson Chi-Square** | **ຄ່າລະດັບຄວາມສຳຄັນ Sig. (2-sided)** |
|---|---|---|---|---|
| | **0.00 – 0.49** | **0.50 – 1.00** | | |
| ຮ້ານຂາຍເຄື່ອງຍົກ | 1 | 1 | 8.11** | 0.017 |
| ຮ້ານຂາຍເຄື່ອງຍ່ອຍ | 31 | 1 | 2.48 | 0.779 |
| ບໍລິການທີ່ພັກ ແລະ ອາຫານ | 9 | 1 | 4.05 | 0.399 |
| ບໍລິການດ້ານການເງິນ ແລະ ເງິນຝາກ | 2 | 1 | 8.23** | 0.016 |
| ບໍລິການສ້ອມແປງທຸກຊະນິດ | 5 | 1 | 8.52* | 0.074 |

| | | | | |
|---|---|---|---|---|
| ບໍລິການອື່ນໆ | 6 | 0 | 0.77 | 0.679 |

ແຫຼ່ງຂໍ້ມູນ: ຈາກການເກັບຂໍ້ມູນຕົວຈິງຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ ການວິເຄາະຂໍ້ມູນດ້ວຍໂປຣແກມວິເຄາະຂໍ້ມູນທາງສະຖິຕິ SPSS version 22.

ຕາຕະລາງ 1.5 ຜົນການວິເຄາະວິເຄາະຄວາມສຳພັນລະຫວ່າງໂຄງສ້າງລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ ກັບການກະຈາຍລາຍໄດ້ພາກຄົວເຮືອນຂອງປະຊາຊົນ ເມືອງນາໝໍ້ ແຂວງອຸດົມໄຊ.

| **ລາຍໄດ້ຈາກແຮງງານ, ຄ່າຈ້າງ, ຊັບສິນບັດ ແລະ ອື່ນໆ** | **ສຳປະສິດ GINI** | | **ສະຖິຕິທົດສອບ Pearson Chi-Square** | **ຄ່າລະດັບຄວາມສຳຄັນ Sig. (2-sided)** |
|---|---|---|---|---|
| | **0.00 – 0.49** | **0.50 – 1.00** | | |
| ເງິນເດືອນ | 72 | 16 | 27.32*** | 0.000 |
| ແຮງງານລາຍວັນ | 36 | 11 | 14.24*** | 0.007 |
| ເງິນອຸດໜູນ | 33 | 5 | 0.83 | 0.934 |
| ບໍານານ | 2 | 1 | 3.19 | 0.203 |
| ການໃຫ້ເຊົ່າຊັບສິນບັດ | 3 | 1 | 0.79 | 0.375 |
| ອື່ນໆ (ລາຍໄດ້ຈາກການຖືກຫວຍ) | 1 | 2 | 16.17*** | 0.001 |

ແຫຼ່ງຂໍ້ມູນ: ຈາກການເກັບຂໍ້ມູນຕົວຈິງຂອງປະຊາຊົນເມືອງນາໝໍ້ ແຂວງອຸດົມໄຊ ແລະ ການວິເຄາະຂໍ້ມູນດ້ວຍໂປຣແກມວິເຄາະຂໍ້ມູນທາງສະຖິຕິ SPSS version 22.